**ແຜນການສອນ**

**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ 06-ກັນຍາ 2009 (09-06-2009)**

---

## <u>ພຣະເຢຊູຜູ້ທີ່ທຸກຄົນຄວນຮູ້ຈັກ:</u>

**<u>ຂໍ້ພຣະຄັມພີໃນບົດຮຽນ</u>**: (ມາຣະໂກ 1:1-3, 7, 9-13, 21-28)

**<u>ບົດຮຽນນີ້ເວົ້າກ່ຽວກັບຫຍັງ?:</u>**

ບົດຮຽນນີ້ແມ່ນກ່ຽວກັບການແນະນຳຂອງທ່ານມາຣະໂກທີ່ເປີດເຜີຍໃຫ້ເຫັນບຸຄລິກພິເສດຂອງພຣະເຢຊູ. ພຣະເຢຊູແມ່ນຜູ້ທີ່ໄດ້ມາເຮັດໃຫ້ຄຳທຳນວາຍໃນພຣະຄັມພີເດີມໃຫ້ສຳເຣັດ ແລະກໍເປັນບຸດຂອງພຣະເຈົ້າອົງຊົງຣິດ.

**<u>ເປັນຫຍັງບົດຮຽນນີ້ຈຶ່ງມີຄວາມສຳຄັນ?:</u>**

ມີຫລາຍຄົນບໍ່ມີຄວາມແນ່ນອນວ່າ ພຣະເຢຊູເປັນພຣະຜູ້ຊ່ອຍໃຫ້ລອດພົ້ນບາບ, ເປັນບຸດຂອງພຣະເຈົ້າ. ມີຫລາຍຄົນຍັງລັ້ງເລບໍ່ໝັ້ນໃຈໃນການຮັບເອົາພຣະຄຣິດພຽງຜູ້ດຽວ. ຂໍ້ຄວາມຕ່າງໆ ຊຶ່ງພົບໃນບົດບັນທຶກຂອງທ່ານມາຣະໂກບອກວ່າພຣະເຢຊູຄືພຣະຄຣິດ.

**<u>ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານຢ່າງໃດ?:</u>**

ບົດຮຽນນີ້ ຈະຊ່ອຍທ່ານໃຫ້ສ້າງສາຍສັມພັນລະຫວ່າງຣິດເດດອັນພິເສດ ແລະອຳນາດຂອງພຣະເຢຊູ ແລະຊີວິດພິເສດທີ່ພຣະອົງຊົງເອີ້ນໃຫ້ທ່ານດຳຣົງຄົງຢູ່.

**<u>ການຈັດຕຽມ ແລະແຜນການສອນຂອງຄຣູ:</u>**

1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລົ້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ........
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

**<u>ແນະນຳ:</u>**

- ເວົ້າເຖິງການຜູ້ໃຫຍ່ທີ່ກັບຄືນໄປຫາຄົນໃດຄົນນຶ່ງ, ແລະເຕີມຄຳເວົ້າທີ່ປະສົບການຂອງຕົນເອງໃສ່ໃນບ່ອນຍະຫວ່າງໄວ້ໃຫ້ສົມບູນ: ຖ້າທ່ານຮູ້ຈັກຂ້າພະເຈົ້າ, ທ່ານກໍຄວນຮູ້ຈັກວ່າ ຂ້າພະເຈົ້າຮັກ_______ _________________ . ໃນທັນໃດນັ້ນໃຫ້ເຂົາເຈົ້າເຮັດຄືກັນໃນຂ້າງລຸ່ມນີ້: ຖ້າທ່ານຮູ້ຈັກຂ້າພະເຈົ້າ, ທ່ານກໍຈະຮູ້ວ່າຂ້າພະເຈົ້າບໍ່ມັກ_______________________________.
- ຊີ້ແຈງເຣື່ອງຫົວຂໍ້ບົດຮຽນມື້ນີ້ວ່າ: ຄົນໃນສມັຍນີ້ໄດ້ຮູ້ຈັກເຣື່ອງພຣະເຢຊູ, ແຕ່ເຂົາເຈົ້າບໍ່ຮູ້ຈັກພຣະອົງໂດຍສ່ວນຕົວ, ຊຶ່ງເຮັດໃຫ້ການຮູ້ຈັກມີຄວາມແຕກຕ່າງໃນການບອກເລົ່າບັລຍາຍເຣື່ອງຂອງພຣະອົງ ແລະ

ໃນການທີ່ພວກເຮົາເບິ່ງເຫັນພຣະອົງ.

1. **<u>ຮູ້ຈັກພຣະບຸດອົງພິເສດຂອງພຣະເຈົ້າ:</u>** (ມາຣະໂກ 1:1-3)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ ມາຣະໂກ 1:1-3
- ໃຫ້ນັກຮຽນອາສາສມັກແບ່ງປັນສາມຊື່ທີ່ເອີ້ນສຳລັບພຣະເມສາໃນຂໍ້ (1). (ພຣະເຢຊູ, ພຣະຄຣິດ, ພຣະບຸດຂອງພຣະເຈົ້າ). ໃນຂໍ້ (3) ກໍໃຫ້ເຮັດເຊັ່ນດຽວກັນ (ພຣະຜູ້ເປັນເຈົ້າ). ທາງຂ້າງຂອງຄຳວ່າ ພຣະເຢຊູ ໃຫ້ຂຽນ "ຢາເວພຣະຜູ້ຊ່ອຍໃຫ້ລອດພົ້ນ" ພາສາກຣີກ ສຳລັບພາສາເຮັບເຣີແມ່ນ ພຣະເມຊີອາ." ຊຶ່ງຊີ້ໃຫ້ເຫັນວ່າທັງສອງຄຳນີ້ມີຄວາມໝາຍວ່າ "ຜູ້ຖືກຊົງຫົດສົງ (ເຈີມ)." ທາງຂ້າງຄຳວ່າໃຫ້ຂຽນ "ພຣະອາຈານ ຫລື ເຈົ້າຂອງ."
- ຄຣິສຕຽນທີ່ເຂົ້າໃຈແລ້ວຕ້ອງແບ່ງປັນເຖິງເຣື່ອງທີ່ວ່າ ພຣະເຢຊູຄຣິດເທົ່ານັ້ນເປັນທາງດຽວທີ່ມີຄວາມສັມພັນກັບພຣະເຈົ້າຢ່າງຖືກຕ້ອງ. ຊຶ່ງນາມຊື່ພຣະເມຊີອາເປັນການຢືນຢັນ ເປັນການຢັ້ງຢືນຂອງພຣະຄຣິດ ແລະການທຳງານຂອງພຣະຄຣິດທີ່ເຕືອນພວກເຮົາ.

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** (ມາຣະໂກ 1:1-3)

1. ນາມຊື່ໃດແດ່ໃນສມັຍນີ້ ທີ່ທ່ານໄດ້ຍິນຄົນເອີ້ນນອກຈາກພຣະເຢຊູ? (ພຣະຄຣິດ)
2. ທ່ານຈະສາມາດບັລຍາຍພຣະລັກສນະຂອງພຣະເຢຊູໄດ້ຢ່າງໃດ?
3. ທ່ານຈະຄິດວ່າຄົນອື່ນໆຈະຮູ້ຈັກວ່າທ່ານໄດ້ຮູ້ຈັກພຣະເຢຊູ ຫລືຮູ້ເຣື່ອງພຣະເຢຊູໄດ້ແນວໃດ?

2. **<u>ຮູ້ຈັກຣິດເດດຂອງພຣະເຢຊູ:</u>** (ມາຣະໂກ 1:7, 9-13)

- ສເນີໃຫ້ນັກຮຽນຜູ້ນຶ່ງອ່ານພຣະທັມ ມາຣະໂກ 1:7, 9-13
- ໃຫ້ນັກຮຽນອ່ານຂໍ້ 10-11 ອີກເທື່ອນຶ່ງ ແລ້ວໃຫ້ເຂົາເຈົ້າຈົດບັນທຶກພຣະຄຳຂອງພຣະເຈົ້າທີ່ສະທ້ອນເຖິງຄວາມສັມພັນຂອງພຣະເຢຊູກັບພຣະບິດາໃສ່ໃນປຶ້ມຂອງເຂົາເຈົ້າ. (ຊັຍຊະນະເໜືອການທົດລອງ)
- ແນະນຳໃຫ້ນັກຮຽນອ່ານຂໍ້ 12-13 ແລະໃຫ້ເຂົາເຈົ້າບັນລະຍາຍເຣື່ອງພຣະເຢຊູຊັຍຊະນະເໜືອການທົດລອງໃສ່ໃນປຶ້ມຂອງເຂົາເຈົ້າ.
- ທີ່ພຣະເຢຊູໄດ້ຊັຍຊະນະເໜືອການທົດລອງຍ້ອນຣິດເດດຂອງພຣະອົງຈະຊ່ອຍຄຣິສຕຽນໃນສມັຍນີ້ເຊັ່ນດຽວກັນ.
- ໃຫ້ນັກຮຽນຫລັບຕາ ແລະວາດພາບເບິ່ງໃນການທີ່ເຂົາເຈົ້າໄດ້ເຂົ້າສ່ວນໃນການບັບຕິສະມາຢ່າງດຽວກັນກັບພຣະເຢຊູ.

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** ມາຣະໂກ 1:7,9-13

1. ທ່ານຈະຕອບສນອງຕໍ່ຜູ້ທີ່ເວົ້າຢ່າງມີພລັງແລະຜູ້ຕໍ່າຕ້ອຍທີ່ບໍ່ມີການລົງລອຍກັນແນວໃດ?
2. ທ່ານມີຄວາມຮູ້ສຶກເຣື່ອງການມີສິດທິຣິດເດດດຽວກັນກັບຣິດເດດທີ່ຊ່ອຍພຣະເຢຊູໃຫ້ໄດ້ຊັຍຊະນະເໜືອການທົດລອງນັ້ນທ່ານຄິດວ່າແນວໃດ?
3. ໃນການສຶກສາຂອງທ່ານແມ່ນປໂຍກໃດທີ່ເຮັດໃຫ້ທ່ານເຊື່ອໄວ້ວາງໃຈໃນນໍ້າພຣະທັຍຂອງພຣະເຈົ້າ?

3 . **<u>ຮູ້ຈັກອຳນາດຂອງພຣະເຢຊູ:</u>** (ມາຣະໂກ 1:21-28)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ 1ມາຣະໂກ 1:21-28
- ແນະນຳໃຫ້ຫາຄູ່ ແລະໄປຄົ້ນຄວ້າໃນຂໍ້ 21-22 ແລະ 27 ເພື່ອຈະພົບໃນທາງນຶ່ງທີ່ພຣະເຢຊູໄດ້ຊົງສຳແດງເຖິງອຳນາດຂອງພຣະອົງ (ການສິດສອນຂອງພຣະອົງ)
- ທ່ານມາຣະໂກໄດ້ບອກເຖິງອຳນາດຂອງພຣະເຢຊູອັນທີນຶ່ງຄື ການສິດສອນຂອງພຣະອົງ ແຕ່ພຣະເຢຊູເອງກໍໄດ້ສຳແດງອຳນາດຂອງພຣະອົງຜ່ານການກະທຳຂອງພຣະອົງເຊັ່ນດຽວກັນ.
- ໃຫ້ເຂົາເຈົ້າກັບໄປເບິ່ງຂໍ້ 27-28 ອີກແລ້ວບັນລະຍາຍວ່າພຣະເຢຊູໄດ້ຊົງສຳແດງອຳນາດຂອງພຣະອົງຢ່າງໃດ?
- ຣິດເດດ ແລະອຳນາດຂອງພຣະເຢຊູໄດ້ຢັ້ງຢືນວ່າພຣະອົງຊົງເປັນບຸດທີ່ຮັກຂອງພຣະເຈົ້າ.

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** ມາຣະໂກ 1:21-28

1. ໃນເມື່ອທ່ານມີຄວາມແປກປລາດໃຈໃນຣິດເດດແລະອຳນາດຂອງພຣະເຢຊູທ່ານຈະພັລນາແນວໃດ?
2. ທ່ານຈະອະທິບາຍຄວາມປາຖນາໃຫ້ມີຄວາມສັມພັນກັບພຣະຄຣິດໃນຂະນະທີ່ມີຄວາມຊົງຈຳເຣື່ອງອຳນາດຂອງພຣະອົງໃນຊີວິດຂອງທ່ານ?

## <u>ພຣະຄັມພີແຫ່ງຄວາມຈິງ</u>

- ພວກເຮົາສົມຄວນທີ່ຈະຕ້ອງຮູ້ຈັກພຣະຄຣິດ, ບໍ່ພຽງແຕ່ຮູ້ຈັກເຣື່ອງຂອງພຣະອົງເທົ່ານັ້ນ.
- ໃຫ້ຮູ້ຈັກພຣະຄຣິດ, ພວກເຮົາຕ້ອງຈົດຈຳຫລັກຖານທີ່ພຣະອົງຊົງສຳແດງ.
- ການມີຄວາມສັມພັນກັບພຣະຄຣິດເປັນປະສົບການໃນຣິດອຳນາດຂອງພຣະອົງໃນການດຳເນີນຊີວິດຂອງພວກເຮົາ.
- ຖ້າພວກມີຄວາມສັມພັນກັບພຣະຄຣິດ, ພວກເຮົາກໍຈະມີຄວາມຈື່ຈຳສິດທິອຳນາດຂອງພຣະອົງໃນຊີວິດຂອງພວກເຮົາ.
- ມີຫລາຍຄົນທີ່ຮູ້ຈັກເຣື່ອງພຣະເຢຊູ, ແຕ່ເຂົາເຈົ້າບໍ່ໄດ້ຮູ້ສ່ວນເລິກໃນຕົວຂອງພຣະອົງ, ສະນັ້ນຈຶ່ງເຮັດໃຫ້ທຸກສິ່ງຜັນແປໄປຕ່າງໆນາໆໃນເຣື່ອງທີ່ພວກເຮົາບັນລະຍາຍເຖິງເຣື່ອງຂອງພຣະອົງ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by JH**